14th High-Level Round Table Meeting

Vientiane Capital

# ການນຳສະເໜີກ່ຽວກັບແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ

## ໂດຍ: ພະນະທ່ານ ສັນຕິພາບ ພົມວິຫານ, ລັດຖະມົນຕີກະຊວງການເງິນ

**ວັນທີ 19 ພະຈິກ 2025**

**ທີ່ ຫໍປະຊຸມແຫ່ງຊາດ, ນະຄອນຫຼວງວຽງຈັນ**

# ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ 9 (2021-2025)

ຜົນສຳເລັດ

- **ເປົ້າໝາຍທີ 1 ສະຖຽນລະພາບທາງເສດຖະກິດມະຫາພາກ ແລະ ການເຕີບໂຕ:** ຕະຫຼອດໄລຍະປີ 2021-2025, ການເຕີບໂຕເສດຖະກິດຂະຫຍາຍຕົວສະເລ່ຍ 4.24% (ຄາດໝາຍ 4% ຂຶ້ນໄປ), ການຜະລິດ ແລະ ການບໍລິການແມ່ນໄປຕາມແຜນ. ຂອບວຽກນະໂຍບາຍການເງິນຮອບດ້ານຖືກສ້າງຂຶ້ນເພື່ອປັບປຸງໂຄງສ້າງງົບປະມານແຫ່ງລັດ ເພື່ອຄາດຄະເນການເກັບລາຍຮັບພາຍໃນ.

- **ເປົ້າໝາຍທີ 2 ພັດທະນາຊັບພະຍາກອນມະນຸດ:** ຄາດໝາຍໂດຍລວມແມ່ນເປັນໄປຕາມແຜນ, ເຊິ່ງມີຄວາມຄືບໜ້າໃນຂົງເຂດການສຶກສາຂັ້ນອະນຸບານ, ປະຖົມ ແລະ ຊັ້ນສູງ, ມີການຂະຫຍາຍຕາໜ່າງສາທາລະນະສຸກໃຫ້ທົ່ວເຖິງ, ອັດຕາການເສຍຊີວິດຂອງເດັກເກີດໃໝ່ ແລະ ແມ່ ຫຼຸດລົງ.

- **ເປົ້າໝາຍທີ 3 ປັບປຸງຊີວິດການເປັນຢູ່ຂອງປະຊາຊົນ:** ພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກແມ່ນມີຄວາມຄືບໜ້າຫຼາຍສົມຄວນ, ໂດຍສະເພາະແມ່ນຢູ່ເຂດຫ່າງໄກສອກຫຼີກ ແລະ ເຂດຈຸດສຸມການພັດທະນາ. ວຽກງານສະຫວັດດີການສັງຄົມ ແລະ ປົກປ້ອງສັງຄົມໄດ້ເພີ່ມຂຶ້ນ. ການເກັບກູ້ລະເບີດທີ່ບໍ່ທັນແຕກມີຄວາມຄືບໜ້າຊ່ວຍຮັບປະກັນຄວາມປອດໄພຕໍ່ຊີວິດ.

# ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ 9 (2021-2025)

ຜົນສຳເລັດ

- **ເປົ້າໝາຍທີ 4 ປົກປັກຮັກສາສິ່ງແວດລ້ອມ ແລະ ຫຼຸດຜ່ອນຄວາມສ່ຽງຈາກໄພພິບັດ:** ມີຄວາມເອົາໃຈໃສ່ຢ່າງຂຸ້ນຂ້ຽວເຂົ້າໃນການຈັດຕັ້ງປະຕິບັດວຽກງານດິນຟ້າອາກາດ ແລະ ສິ່ງແວດລ້ອມ ເປັນຕົ້ນແມ່ນ ການຜະລິດກະສິກຳສີຂຽວ, ການນຳໃຊ້ລົດໄຟຟ້າ, ການຄຸ້ມຄອງທີ່ດິນ, ການເພີ່ມສະຖານີອຸຕຸນິຍົມ ແລະ ສູນຫຼຸດຜ່ອນຜົນກະທົບຈາກໄພພິບັດ.

- **ເປົ້າໝາຍທີ 5 ຮ່ວມມືກັບພາກພື້ນ-ສາກົນ ແລະ ການເຊື່ອມໂຍງ-ເຊື່ອມຈອດ:** ສືບຕໍ່ວຽກງານປັບປຸງໂຄງລ່າງພື້ນຖານ ເປັນຕົ້ນແມ່ນ ເລວທາງລົດໄຟລາວ-ຈີນ ແລະ ທ່າບົກ 3 ແຫ່ງ, ປັບປຸງການນຳໃຊ້ຊັບພະຍາກອນ ແລະ ເຕັກນິກການຜະລິດ ເຊິ່ງໄດ້ຊ່ວຍໃຫ້ຂະແໜງການເຕີບໂຕສະເລ່ຍ 4.7% ແລະ ກວມເອົາ 32.5% ຂອງ GDP (ຄາດໝາຍ: ການເຕີບໂຕ 4.1% ແລະ ກວມເອົາ 32.2% ຂອງ GDP).

- **ເປົ້າໝາຍທີ 6 ການຄຸ້ມຄອງບໍລິຫານລັດ:** ມີປະສິດທິຜົນດີຂຶ້ນຈາກການປັບປຸງໂຄງຮ່າງການຈັດຕັ້ງລັດຖະບານ ນັບແຕ່ຂັ້ນສູນກາງ ແລະ ທ້ອງຖິ່ນ ໂດຍຫຼຸດຈຳນວນກະຊວງຈາກ 19 ລົງມາເຫຼືອ 15 ກະຊວງ ແລະ ຫຼຸດໜ່ວຍງານຂັ້ນແຂວງຈາກ 574 ລົງມາເຫຼືອ 502 ໜ່ວຍງານ, ໄດ້ທົດລອງຫັນ 7 ຫົວໜ່ວຍວິຊາການທີ່ມີລາຍຮັບໄປສູ່ການກຸ້ມຕົນເອງດ້ານງົບປະມານ, ສຳເລັດການຈັດຕັ້ງປະຕິບັດແຜນຍຸດທະສາດແຫ່ງຊາດເພື່ອຫັນການບໍລິການລັດຜ່ານກົນໄກປະຕູດຽວ ຮອດປີ 2030.

# ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ X (2026-2030)

"ຍົກສູງຈິດໃຈມຸ່ງໝັ້ນພັດທະນາຢ່າງແຮງກ້າ, ຕັ້ງໜ້າສ້າງເສດຖະກິດເອກະລາດ ເປັນເຈົ້າຕົນເອງ, ນໍາໃຊ້ທຸກທ່າແຮງຢ່າງມີປະສິດທິຜົນ, ພັດທະນາເສດຖະກິດ-ສັງຄົມຕາມທິດວ່ອງໄວ, ສີຂຽວ ແລະ ຍືນຍົງ".

# ການຮ່າງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ 10

## ຖອດຖອນບົດຮຽນຈາກການສະຫຼຸບຕີລາຄາກາງສະໄໝໃສ່ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ຄັ້ງທີ 9


ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ສະຫຼຸບການຈັດຕັ້ງປະຕິບັດ
ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ
ກາງສະໄໝ 5 ປີ ຄັ້ງທີ IX (2021-2025)

ນະຄອນຫຼວງວຽງຈັນ

- ການສະຫຼຸບຕີລາຄາກາງສະໄໝໃສ່ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ຄັ້ງທີ 9 ໄດ້ໃຫ້ບົດຮຽນ/ຄຳຄິດເຫັນສຳລັບການຮ່າງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ 10
- ບົດຮຽນ/ຄຳຄິດເຫັນ ຖືກສະຫຼຸບຕີລາຄາ ແລະ ບັນຈຸເຂົ້າໃນການປຶກສາຫາລືກັບບັນດາກະຊວງທີ່ກ່ຽວຂ້ອງ ແລະ ຄູ່ຮ່ວມພັດທະນາ
- ບົດຮຽນ/ຄຳຄິດເຫັນ ລົງເລິກໃສ່ 6 ເນື້ອໃນ:
  - ນະໂຍບາຍຍຸດທະສາດ
  - ເອກະລາດ ເປັນເຈົ້າຕົນເອງ
  - ຄວາມບໍ່ເທົ່າທຽມດ້ານລາຍຮັບ ແລະ ການປ່ຽນແປງດິນຟ້າອາກາດ
  - ຄວາມສອດຄ່ອງດ້ານແຜນຍຸດທະສາດການເງິນ ແລະ ແຜນພັດທະນາເສດຖະກິດ-ສັງຄົມ
  - ຂໍ້ມູນ
  - ການປະກອບສ່ວນຈາກພາກລັດຂັ້ນແຂວງ ແລະ ການມີສ່ວນຮ່ວມຈາກພາກເອກະຊົນ

# ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ 10 (2026-2030)

## ວຽກງານບຸລິມະສິດ/ແຜນວຽກຈຸດສຸມ

ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ຄັ້ງທີ 10 ກຳນົດທິດທາງຍຸດທະສາດ, ເປົ້າໝາຍ, ແຜນວຽກຈຸດສຸມ, ຄາດໝາຍສູ້ຊົນ ແລະ ວຽກງານບຸລິມະສິດ ດັ່ງລຸ່ມນີ້:

**ເປົ້າໝາຍທີ 1: ສ້າງເສດຖະກິດເອກະລາດ ເປັນເຈົ້າຕົນເອງ ດ້ວຍການນໍາໃຊ້ທ່າແຮງ ເພື່ອເຮັດໃຫ້ເສດຖະກິດມີສະຖຽນລະພາບ ແລະ ຂະຫຍາຍຕົວຢ່າງຕໍ່ເນື່ອງ, ມີຄຸນະພາບ, ໝັ້ນທ່ຽງ ແລະ ຍືນຍົງ**

ແຜນວຽກຈຸດສຸມທີ 1: ນໍາໃຊ້ທ່າແຮງ ເພື່ອຍູ້ແຮງເສດຖະກິດໃຫ້ຂະຫຍາຍຕົວຢ່າງຕໍ່ເນື່ອງ, ມີຄວາມເຂັ້ມແຂງ ແລະ ມີຄຸນະພາບສູງຂຶ້ນ
ແຜນວຽກຈຸດສຸມທີ 2: ເສດຖະກິດມະຫາພາກມີຄວາມເຂັ້ມແຂງ ແລະ ໝັ້ນທ່ຽງ
ແຜນວຽກຈຸດສຸມທີ 3: ຍົກສູງປະສິດທິພາບການລົງທຶນໃຫ້ມີຄຸນະພາບ ແລະ ມີປະສິດທິຜົນສູງ
ແຜນວຽກຈຸດສຸມທີ 4: ພັດທະນາຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງໄປສູ່ຄຸນະພາບໃໝ່ໃຫ້ມີຄວາມເຂັ້ມແຂງ ແລະ ສາມາດແຂ່ງຂັນກັບພາກພື້ນ ແລະ ສາກົນ
ແຜນວຽກຈຸດສຸມທີ 5: ພັດທະນາລັດວິສາຫະກິດ ແລະ ເສດຖະກິດລວມໝູ່ຂອງປະຊາຊົນໃຫ້ມີຄຸນະພາບ ແລະ ມີຄວາມເຂັ້ມແຂງ
ແຜນວຽກຈຸດສຸມທີ 6: ພັດທະນາເສດຖະກິດດິຈິຕ໋ອນໃຫ້ມີຄວາມເຂັ້ມແຂງ ເພື່ອຂັບເຄື່ອນການພັດທະນາເສດຖະກິດ-ສັງຄົມໃຫ້ມີການຂະຫຍາຍຕົວທີ່ຍືນຍົງ

**ເປົ້າໝາຍທີ 2: ພັດທະນາຊັບພະຍາກອນມະນຸດໃຫ້ມີຄຸນະພາບສູງຂຶ້ນ ແລະ ສາມາດຮັບນໍາໃຊ້ເຕັກໂນໂລຊີທີ່ທັນສະໄໝ**

ແຜນວຽກຈຸດສຸມທີ 1: ພັດທະນາການສຶກສາໃຫ້ມີຄຸນະພາບ ເພື່ອຮອງຮັບການພັດທະນາຂອງປະເທດຊາດ
ແຜນວຽກຈຸດສຸມທີ 2: ປັບປຸງຄຸນະພາບວຽກງານສາທາລະນະສຸກ ແລະ ການບໍລິການດ້ານສາທາລະນະສຸກໃຫ້ມີຄຸນະພາບ ແລະ ທົ່ວເຖິງ
ແຜນວຽກຈຸດສຸມທີ 3: ພັດທະນາສີມືແຮງງານໃຫ້ໄດ້ປະລິມານ ແລະ ຄຸນະພາບ ເພື່ອຕອບສະໜອງຄວາມຕ້ອງການພັດທະນາ
ແຜນວຽກຈຸດສຸມທີ 4: ບຸກຄະລາກອນຂອງພາກລັດໄດ້ຮັບການພັດທະນາ ແລະ ມີຄຸນະພາບສູງຂຶ້ນ

# ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ 10 (2026-2030)

## ວຽກງານບູລິມະສິດ/ແຜນວຽກຈຸດສຸມ (ສືບຕໍ່)

**ເປົ້າໝາຍທີ 3: ປັບປຸງຊີວິດການເປັນຢູ່ຂອງປະຊາຊົນໃຫ້ດີຂຶ້ນ, ຕົວເມືອງ ແລະ ຊົນນະບົດໄດ້ຮັບການພັດທະນາຢ່າງສົມດູ່ ແລະ ແກ້ໄຂຄວາມທຸກຍາກຂອງປະຊາຊົນໃຫ້ຫຼຸດລົງເທື່ອລະກ້າວ**

ແຜນວຽກຈຸດສຸມທີ 1: ພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກຂອງປະຊາຊົນໃຫ້ມີຄຸນະພາບດີຂຶ້ນ
ແຜນວຽກຈຸດສຸມທີ 2: ປັບປຸງວຽກງານຄໍ້າປະກັນສະບຽງອາຫານ ແລະ ໂພຊະນາການ ໃຫ້ທົ່ວເຖິງ ແລະ ມີຄຸນະພາບສູງຂຶ້ນ
ແຜນວຽກຈຸດສຸມທີ 3: ສົ່ງເສີມ ແລະ ພັດທະນາໄວໜຸ່ມ, ແມ່ຍິງ, ເດັກ ແລະ ຄວາມສະເໝີພາບຍິງ-ຊາຍ ໃຫ້ມີຄຸນະພາບດີຂຶ້ນ
ແຜນວຽກຈຸດສຸມທີ 4: ພັດທະນາວຽກງານຖະແຫຼງຂ່າວໃຫ້ທັນສະໄໝ ແລະ ວ່ອງໄວ, ສົ່ງເສີມວັດທະນະທຳ ທີ່ເປັນເອກະລັກຂອງຊາດ, ກ້າວໜ້າ ແລະ ສ້າງໃຫ້ສັງຄົມມີຄວາມສາມັກຄີເປັນປຶກແຜ່ນ ແລະ ສີວິໄລ
ແຜນວຽກຈຸດສຸມທີ 5: ປັບປຸງລະບົບປະກັນສັງຄົມ-ປົກປ້ອງສັງຄົມໃຫ້ກວ້າງຂວາງ ແລະ ມີຄຸນະພາບ
ແຜນວຽກຈຸດສຸມທີ 6: ແກ້ໄຂບັນຫາລະເບີດບໍ່ທັນແຕກ ແລະ ປັບປຸງຊີວິດການເປັນຢູ່ຂອງປະຊາຊົນທີ່ໄດ້ຮັບຜົນກະທົບຈາກລະເບີດບໍ່ທັນແຕກໃຫ້ດີຂຶ້ນເທື່ອລະກ້າວ

**ເປົ້າໝາຍທີ 4: ປົກປັກຮັກສາຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ໃຫ້ມີຄວາມຍືນຍົງ ແລະ ສາມາດກຽມພ້ອມຮັບມືກັບການປ່ຽນແປງດິນຟ້າອາກາດ ແລະ ໄພພິບັດຕ່າງໆ**

ແຜນວຽກຈຸດສຸມທີ 1: ການຄຸ້ມຄອງ ແລະ ນຳໃຊ້ຊັບພະຍາກອນທຳມະຊາດປ່າໄມ້, ທີ່ດິນ, ນໍ້າ ແລະ ແຮ່ທາດ ຢ່າງມີແຜນການ, ປະຢັດ, ໃຫ້ເກີດຜົນປະໂຫຍດສູງສຸດ ແລະ ມີຄວາມຍືນຍົງ
ແຜນວຽກຈຸດສຸມທີ 2: ສົ່ງເສີມວຽກງານການເຕີບໂຕສີຂຽວ ແລະ ວຽກງານແກ້ໄຂບັນຫາປ່ຽນແປງດິນຟ້າອາກາດ ເພື່ອຫຼຸດຜ່ອນ ແລະ ເພີ່ມການດູດຊັບທາດອາຍເຮືອນແກ້ວໃຫ້ໄດ້ຮັບການຈັດຕັ້ງປະຕິບັດຢ່າງຕັ້ງໜ້າ ແລະ ກວ້າງຂວາງ
ແຜນວຽກຈຸດສຸມທີ 3: ເພີ່ມທະວີການປ້ອງກັນ, ການຄວບຄຸມ ແລະ ການຟື້ນຟູຫຼັງໄພພິບັດຕ່າງໆ

# ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ 10 (2026-2030)

## ວຽກງານບຸລິມະສິດ/ແຜນວຽກຈຸດສຸມ (ສືບຕໍ່)

**ເປົ້າໝາຍທີ 5: ການເຊື່ອມໂຍງ-ເຊື່ອມຈອດກັບພາກພື້ນ ແລະ ສາກົນ ຢ່າງກວ້າງຂວາງ ແລະ ມີປະສິດທິຜົນ**

ແຜນວຽກຈຸດສຸມທີ 1: ພັດທະນາໂຄງລ່າງພື້ນຖານທີ່ສາມາດເຊື່ອມຈອດ-ເຊື່ອມໂຍງພາຍໃນ, ພາກພື້ນ ແລະ ສາກົນ ເພື່ອເອື້ອອໍານວຍໃຫ້ແກ່ການຜະລິດ, ການບໍລິການ, ການຄ້າ ແລະ ການລົງທຶນ

ແຜນວຽກຈຸດສຸມທີ 2: ເສີມຂະຫຍາຍການພົວພັນຮ່ວມມື, ການເຊື່ອມໂຍງການຄ້າ ແລະ ການລົງທຶນກັບພາກພື້ນ ແລະ ສາກົນ ຢ່າງຕັ້ງໜ້າ ແລະ ກວ້າງຂວາງຂຶ້ນກວ່າເກົ່າ

ແຜນວຽກຈຸດສຸມທີ 3: ພັດທະນາເຂດແຄວ້ນ ແລະ ທ້ອງຖິ່ນໃຫ້ມີຄວາມສົມດຸນ, ເຂັ້ມແຂງ ແລະ ສອດຄ່ອງກັບທ່າແຮງບົ່ມຊ້ອນ

ແຜນວຽກຈຸດສຸມທີ 4: ການພັດທະນາຕົວເມືອງ ແລະ ເຂດເສດຖະກິດພິເສດ ໃຫ້ກາຍເປັນຖານການຜະລິດ, ການລົງທຶນ, ການຄ້າ ແລະ ການທ່ອງທ່ຽວ ເພື່ອເຊື່ອມໂຍງກັບພາກພື້ນ ແລະ ສາກົນ

**ເປົ້າໝາຍທີ 6: ການຄຸ້ມຄອງບໍລິຫານລັດ ໃຫ້ມີປະສິດທິພາບ, ການເມືອງມີສະຖຽນລະພາບ, ສັງຄົມມີຄວາມສະຫງົບ, ເປັນລະບຽບຮຽບຮ້ອຍ, ຍຸຕິທຳ ແລະ ສີວິໄລ**

ແຜນວຽກຈຸດສຸມທີ 1: ຍົກສູງປະສິດທິພາບການຄຸ້ມຄອງບໍລິຫານລັດໃຫ້ມີຄວາມກະທັດຮັດ, ວ່ອງໄວ ແລະ ເຂັ້ມງວດຕາມກົດໝາຍ ແລະ ວຽກງານ 3 ສ້າງ ໃຫ້ເຂົ້າສູ່ລວງເລິກ ແລະ ປະຕິບັດຕົວຈິງຢ່າງມີປະສິດທິຜົນສູງ

ແຜນວຽກຈຸດສຸມທີ 2: ປັບປຸງກົນໄກ, ລະບຽບການປະສານງານລະຫວ່າງພາກລັດດ້ວຍກັນໃຫ້ມີຄວາມເປັນເອກະພາບ ແລະ ວ່ອງໄວຂຶ້ນ

ແຜນວຽກຈຸດສຸມທີ 3: ຮັບປະກັນໃຫ້ມີສະຖຽນລະພາບທາງດ້ານການເມືອງ, ມີຄວາມສະຫງົບ ແລະ ມີຄວາມເປັນລະບຽບຮຽບຮ້ອຍໃນສັງຄົມ, ສັງຄົມມີຄວາມສາມັກຄີປອງດອງ, ປະຊາທິປະໄຕ, ຍຸຕິທຳ ແລະ ສີວິໄລ

# ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ 10 (2026-2030)

ວຽກງານບຸລິມະສິດ

**ບົດບາດສໍາຄັນຂອງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ຄັ້ງທີ 10** – ພາຍໃຕ້ຫຼັກການເສດຖະກິດທີ່ນໍາໃຊ້ຄວາມຮູ້, ສີຂຽວ ແລະ ຍືນຍົງ, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ຈະປູພື້ນຖານໃຫ້ແກ່ເສດຖະກິດ-ສັງຄົມແບບມີຈຸດສຸມ ພາຍໃຕ້ 3 ມາດຕະການ:

1. **ເພີ່ມທະວີຂອບວຽກກົດໝາຍ, ກົນໄກການຈັດຕັ້ງ ແລະ ການຄຸ້ມຄອງບໍລິຫານ ແນໃສ່ສ້າງປະສິດທິຜົນໃຫ້ການຄຸ້ມຄອງບໍລິຫານລັດ** - ເຊື່ອມສານວຽກງານຫັນເປັນດີຈີຕ໋ອນ, ການກະຈາຍອໍານາດ ແລະ ການມອບສິດ. ຮຽກຮ້ອງໃຫ້ສ້າງສະພາບແວດລ້ອມທີ່ເອື້ອອໍານວຍໃຫ້ແກ່ການລົງທຶນ ແລະ ການດໍາເນີນທຸລະກິດ ແນໃສ່ຮັບປະກັນຄວາມສະດວກ, ວ່ອງໄວ ແລະ ໂປ່ງໃສ.
2. **ຍົກສູງຈິດໃຈມຸ່ງໝັ້ນພັດທະນາຢ່າງແຮງກ້າ ດ້ວຍຈິດໃຈເປັນເອກະລາດ ເປັນເຈົ້າຕົນເອງ ແລະ ມີຄວາມເປັນຜູ້ປະກອບການ** - ເພື່ອຊຸກຍູ້ໃຫ້ປະຊາຊົນ ແລະ ຫົວໜ່ວຍທຸລະກິດຂະຫຍາຍຕົວ, ຕ້ອງເອົາໃຈໃສ່ປັບປຸງຄຸນະພາບຂອງຊັບພະຍາກອນມະນຸດ ແລະ ການພັດທະນາຖານເສດຖະກິດເອກະລາດ ເປັນເຈົ້າຕົນເອງເຂອງພາກເອກະຊົນພາຍໃນ.
3. **ປະຕິຮູບການຄຸ້ມຄອງຊັບພະຍາກອນທໍາມະຊາດ ຢູ່ບັນດາຂະແໜງການ ເພື່ອຍົກສູງປະສິດທິຜົນຂອງການຂຸດຄົ້ນ ແລະ ນໍາໃຊ້ຊັບພະຍາກອນທໍາມະຊາດ ຢູ່ຂະແໜງບໍ່ແຮ່, ພະລັງງານ ແລະ ທີ່ດິນ** - ສົ່ງເສີມຄວາມໂປ່ງໃສ, ຕ້ານການສໍ້ລາດບັງຫຼວງ ແລະ ການສູນເສຍ ແລະ ເພີ່ມລາຍຮັບແຫ່ງລັດ ເພື່ອສ້າງຄວາມເຂັ້ມແຂງທາງການເງິນ ແລະ ເລັ່ງການພັດທະນາເສດຖະກິດ-ສັງຄົມແບບຍືນຍົງ.

# ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ 10 (2026-2030)

## ເປົ້າໝາຍທີ່ພົວພັນກັນ




**ເປົ້າໝາຍທີ 2: ຊັບພະຍາກອນມະນຸດທີ່ມີຄຸນະພາບສູງຂຶ້ນ**

ສົ່ງເສີມຫົວຄິດປະດິດສ້າງ ແລະ ປະສິດທິພາບ, ຊຸກຍູ້ເສດຖະກິດໃຫ້ເຕີບໂຕ (ເປົ້າໝາຍທີ 1).
ສົ່ງເສີມການຄຸ້ມຄອງບໍລິຫານລັດ (ເປົ້າໝາຍທີ 6) ຜ່ານການນຳພາທີ່ຄ່ອງແຄ້ວ ແລະ ມີຈັນຍາບັນ.
ເລັ່ງການເຊື່ອມໂຍງ-ເຊື່ອມຈອດ (ເປົ້າໝາຍທີ 5) ດ້ວຍການສ້າງຄວາມພ້ອມທາງເຕັກໂນໂລຊີ.

**ເປົ້າໝາຍທີ 1: ສ້າງເສດຖະກິດເອກະລາດ ເປັນເຈົ້າຕົນເອງ**

ສ້າງພື້ນຖານໃຫ້ແກ່ການເຕີບໂຕ, ສະໜອງງົບປະມານ ແລະ ສ້າງວຽກເຮັດງານທຳ. ສົ່ງເສີມການລົງທຶນໃນຊັບພະຍາກອນມະນຸດ, ໂຄງລ່າງພື້ນຖານ ແລະ ການປົກປັກຮັກສາສິ່ງແວດລ້ອມ. ອາໃສການຄຸ້ມຄອງບໍລິຫານລັດທີ່ໝັ້ນທ່ຽງ ແລະ ສີມືແຮງງານ ເພື່ອສ້າງຄວາມຍືນຍົງ.

**ເປົ້າໝາຍທີ 3: ການປັບປຸງຊີວິດການເປັນຢູ່ຂອງປະຊາຊົນ**

ຈຸດປະສົງຕົ້ນຕໍ ແລະ ຕົວຊີ້ວັດຂອງເປົ້າໝາຍທັງໝົດ.
ການປັບປຸງຊີວິດການເປັນແມ່ນຜົນໄດ້ຮັບຈາກການຄຸ້ມຄອງບໍລິຫານລັດທີ່ດີ, ເສດຖະກິດມີສະຖຽນລະພາບ ແລະ ສິ່ງແວດລ້ອມທີ່ປອດໄພ
ການສ່ອງແສງລາຍງານກ່ຽວກັບຄວາມໝັ້ນທ່ຽງທາງສັງຄົມ ແລະ ປະສິດທິພາບ ຈະຊ່ວຍສົ່ງເສີມການຄຸ້ມຄອງບໍລິຫານລັດທີ່ດີ.

**ເປົ້າໝາຍທີ 6: ເພີ່ມປະສິດທິພາບໃນການຄຸ້ມຄອງ-ບໍລິຫານລັດ**

ເປັນປັດໃຈສຳຄັນສຳລັບເປົ້າໝາຍທັງໝົດ - ຮັບປະກັນຄວາມໝັ້ນທ່ຽງ, ຄວາມຍຸຕິທຳ ແລະ ການປະສານງານ.
ສ້າງນະໂຍບາຍທີ່ກົມກຽວ ສຳລັບເສດຖະກິດ, ການສຶກສາ, ສິ່ງແວດລ້ອມ ແລະ ການເຊື່ອມໂຍງ-ເຊື່ອມຈອດ.
ສ້າງຄວາມເຊື່ອໝັ້ນ, ຮັກສາສະຖຽນລະພາບທາງສັງຄົມ/ການເມືອງ.

**ເປົ້າໝາຍທີ 4: ປົກປັກຮັກສາສິ່ງແວດລ້ອມ ແລະ ກຽມພ້ອມຮັບມືກັບການປ່ຽນແປງດິນຟ້າອາກາດ**

ປົກປັກຮັກສາຊັບພະຍາກອນທຳມະຊາດ ເພື່ອການເຕີບໂຕທີ່ຍືນຍົງ (ເປົ້າໝາຍທີ 1).
ປັບປຸງຄຸນະພາບຊີວິດການເປັນຢູ່ຂອງປະຊາຊົນ (ເປົ້າໝາຍທີ 3) ໂດຍການນຳໃຊ້ຊັບພະຍາກອນສະອາດ ແລະ ຫຼຸດຜ່ອນຄວາມສ່ຽງ.
ຮຽກຮ້ອງໃຫ້ມີການຄຸ້ມຄອງບໍລິຫານລັດທີ່ດີ ແລະ ການຮ່ວມມື (ເປົ້າໝາຍທີ 5) ເພື່ອການຈັດຕັ້ງປະຕິບັດ ແລະ ມີຫົວຄິດປະດິດສ້າງ.

**ເປົ້າໝາຍທີ 5: ການເຊື່ອມໂຍງ-ເຊື່ອມຈອດກັບພາກພື້ນ ແລະ ສາກົນ**

ຂະຫຍາຍຕະຫຼາດ, ຖ່າຍໂອນເຕັກໂນໂລຊີ ແລະ ແບ່ງປັນຄວາມຮູ້.
ຊຸກຍູ້ການເຕີບໂຕ (ເປົ້າໝາຍທີ 1) ແລະ ການພັດທະນາສີມືແຮງງານ (ເປົ້າໝາຍທີ 2).
ຊ່ວຍກັນປົກປັກຮັກສາສິ່ງແວດລ້ອມ ແລະ ສົ່ງເສີມວຽກງານຄຸ້ມຄອງບໍລິຫານລັດ.

# ຂອບວຽກຕິດຕາມ ແລະ ປະເມີນຜົນ

## ສໍາລັບແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ 10

**ຍົກສູງຂອບວຽກ:** ຮັບປະກັນໃຫ້ທັງ 6 ເປົ້າໝາຍມີຄວາມກົມກຽວກັນ, ສາມາດວັດແທກຕົວຊີ້ວັດ ພ້ອມທັງມີບ່ອນອ້າງອີງ, ຄາດໝາຍສູ້ຊົນ ແລະ ຂໍ້ມູນ.

**ຮັບປະກັນຄວາມຈະແຈ້ງ ແລະ ຕໍ່ເນື່ອງ:** ຊຸກຍູ້ການນໍາໃຊ້ເປົ້າໝາຍ, ແຜນວຽກຈຸດສຸມ, ຄາດໝາຍສູ້ຊົນ ແລະ ຕົວຊີ້ວັດ ຢູ່ບັນດາກະຊວງ ແລະ ຄູ່ຮ່ວມພັດທະນາ.

**ສົ່ງເສີມການນໍາໃຊ້ຕົວຊີ້ວັດທີ່ມີການວິເຄາະແບບ SMART:** ຫຼຸດຄວາມຊໍ້າຊ້ອນ ແລະ ເຮັດໃຫ້ເປົ້າໝາຍມີຄວາມສອດຄ່ອງ.

**ກໍານົດກົນໄກການລາຍງານ:** ກໍານົດບົດບາດ, ຄວາມຮັບຜິດຊອບ ແລະ ໄລຍະເວລາໃນການຄຸ້ມຄອງຂໍ້ມູນ.

**ສົ່ງເສີມການຮ່ວມມື ແລະ ຄວາມເປັນເຈົ້າການ:** ເຮັດໃຫ້ເປົ້າໝາຍແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ສອດຄ່ອງກັບບັນດາແຜນຍຸດທະສາດ ແລະ ງົບປະມານແຫ່ງລັດ.

**ໃນຂອບວຽກຕິດຕາມ ແລະ ປະເມີນຜົນຂອງແຜນພັດທະນາເສດຖະກິດແຫ່ງຊາດ ຄັ້ງທີ 10 ປະກອບມີ:**

- **ຕົວຊີ້ວັດເປົ້າໝາຍ 105 ຕົວ**
- **ຕົວຊີ້ວັດແຜນວຽກຈຸດສຸມ 87 ຕົວ**
- **ລວມທັງໝົດ 192 ຕົວ**

# ແຜນຍຸດທະສາດການເງິນ
## ສຳລັບແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ 10: ຜົນໄດ້ຮັບຈາກການສະຫຼຸບຕີລາຄາ

### *ທ່າອ່ຽງ ແລະ ສິ່ງທ້າທາຍ*

❖ ຄວາມຕ້ອງການລົງທຶນທັງໝົດ: 17 - 18 ຕື້ໂດລາສະຫະລັດ ເພື່ອບັນລຸເປົ້າໝາຍແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ

❖ ຊ່ອງວ່າງທາງການເງິນ: 7 - 8 ຕື້ໂດລາສະຫະລັດ

❖ ທ່າອ່ຽງ:

- ການເງິນພາກລັດພາຍໃນ: ສັດສ່ວນລາຍຮັບຂອງລັດຖະບານຕໍ່ GDP ຍັງຕໍ່າທຽບໃສ່ມາດຖານສະເລ່ຍຂອງພາກພື້ນ; ງົບປະມານແຫ່ງລັດຍັງຈຳກັດຈາກໜີ້ສິນທີ່ສູງ
- ການເງິນພາກລັດຈາກສາກົນ (ການຊ່ວຍເຫຼືອພັດທະນາຈາກຕ່າງປະເທດ): ສ່ວນໃຫຍ່ແມ່ນສະໜອງໃນຮູບແບບໂຄງການ ≈ 600 ລ້ານໂດລາສະຫະລັດ/ປີ, ມີທ່າອ່ຽງຫຼຸດລົງເລື້ອຍໆ ຍ້ອນການອອກຈາກສະຖານະພາບປະເທດດ້ອຍພັດທະນາ
- ການເງິນພາກເອກະຊົນພາຍໃນ: ຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ ກວມອັດຕາສ່ວນຫຼາຍ, ແຕ່ພົບກັບອຸປະສັກດ້ານສິນເຊື່ອ; ຕະຫຼາດທຶນທີ່ນ້ອຍ
- ການເງິນພາກເອກະຊົນຈາກຕ່າງປະເທດ: ການລົງທຶນສ່ວນໃຫຍ່ໃນໂຄງການພະລັງງານ, ບໍ່ແຮ່, ກຳລັງຫັນໄປສູ່ການຜະລິດປຸງແຕ່ງ, ພະລັງງານສີຂຽວ/ພະລັງງານທົດແທນເລີ່ມປະກົດຂຶ້ນ

❖ ສິ່ງທ້າທາຍຕົ້ນຕໍ: ງົບປະມານແຫ່ງລັດມີຈຳກັດ, ການຊ່ວຍເຫຼືອມີຈຳກັດ, ການເກັບລາຍຮັບພາຍຍັງບໍ່ທັນສູງ, ພາກເອກະຊົນຍັງພວມຢູ່ໃນໄລຍະຂະຫຍາຍຕົວ.

# ແຜນຍຸດທະສາດການເງິນ
## ສໍາລັບແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ 10: ການອັດຊ່ອງວ່າງ

### *ໜ້າວຽກບຸລິມະສິດສໍາລັບຄູ່ຮ່ວມພັດທະນາລະດັບສູງ*

- ປັບປຸງປະສິດທິພາບໃນການເກັບລາຍຮັບ ແລະ ການໃຊ້ຈ່າຍແຫ່ງລັດ
  ຂະຫຍາຍຖານເກັບອາກອນ, ປະຕິຮູບສິ່ງຈູງໃຈ, ຈັດຊັ້ນງົບປະມານໃຫ້ສອດຄ່ອງກັບຂົງເຂດບຸລິມະສິດ
- ສົ່ງເສີມການລົງທຶນ ແລະ ການເຂົ້າເຖິງການເງິນ
  ນໍາໃຊ້ເຄື່ອງມືທາງການເງິນໃໝ່, ຊຸກຍູ້ຫົວໜ່ວຍທຸລະກິດ, ສົ່ງເສີມຂະແໜງການທີ່ມີທ່າແຮງ
- ສົ່ງເສີມການຄຸ້ມຄອງບໍລິຫານລັດທີ່ດີ ແລະ ການເປັນຄູ່ຮ່ວມ
  ຕິດຕາມກວດກາຢ່າງໂປ່ງໃສ, ດໍາເນີນການປະຕິຮູບແບບມີສ່ວນຮ່ວມ, ຮ່ວມມືກັນອອກນະໂຍບາຍ

14th High-Level Round Table Meeting

Vientiane Capital

# ຂອບໃຈ